**WWF-Laos**

P.O. Box. 7871
House no. 39, unit 05, Saylom village,
Chanthabouly district, Vientiane, Lao PDR
Tel: +856 21 216 080
Fax: +856 21 251 883

E-mail: wwf-laos@wwf.org.la
Website: www.wwf.org.la

# JOB DESCRIPTION

**Position title**: Project Driver, Central Annamites, WWF-Laos

**Reports to**: Project Manager, Central Annamites, WWF-Laos

**Supervises**: None

**Grade (Career level):** Operational Support

**Location:** Saravanh - Laos

**Date:** June 2022

## I. Background:

World Wide Fund for Nature – WWF has had a presence in Laos since the late 1980s, when it contributed to some of the first biodiversity surveys that established Laos' protected area system. The head office was officially established in 2001 in Vientiane Capital and we now have field offices in Savannakhet, Champassak, Salavan, and Xekong provinces. WWF-Laos works with government, civil society, and the private sector partners to address the drivers of biodiversity loss and to move towards a greener nature-based future where the people of Laos can thrive and live in harmony with nature.

ອົງການ ກອງທຶນອະນຸຮັກທຳມະຊາດໂລກ (World Wide Fund for Nature – WWF) ເຮັດວຽກຢູ່ໃນ ສປປ ລາວ ຕັ້ງແຕ່ທ້າຍຊຸມປີ 1980 ເປັນຕົ້ນມາ, ໂດຍປະກອບສ່ວນເຂົ້າໃນການສຳຫຼວດຊີວະນາໆພັນຄັ້ງທຳອິດ ສຳລັບສ້າງລະບົບປ່າສະຫງວນຂອງລາວ. ສຳນັກງານໃຫຍ່ໄດ້ສ້າງຕັ້ງຂຶ້ນຢ່າງເປັນທາງການໃນປີ 2001 ທີ່ ນະຄອນຫຼວງວຽງຈັນ ແລະ ປະຈຸບັນພວກເຮົາມີຫ້ອງການພາກສະໜາມຢູ່ແຂວງສະຫວັນນະເຂດ, ຈຳປາສັກ, ສາລະວັນ ແລະ ແຂວງເຊກອງ. ອົງການ WWF-Laos ຮ່ວມມືກັບພາກລັດ, ອົງການຈັດຕັ້ງທາງສັງຄົມ ແລະ

President: Pavan Sukhdev
Director General: Marco Lambertini
President Emeritus: HRH The Duke of Edinburgh
Founder President: HRH Prince Bernhard of the Netherlands

Registered as: WWF-World Wide Fund for Nature, WWF-Fondo Mondiale per la Natura
WWF-Fondo Mundial para la Naturaleza, WWF-Fonds Mondial pour la Nature
WWF-Welt Natur Fonds. Formerly as World Wildlife Fund

ພາກເອກະຊົນ ເພື່ອແກ້ໄຂບັນຫາການສູນເສຍຊີວະນາໆພັນ ແລະ ກ້າວໄປສູ່ອະນາຄົດທີ່ຂຽວສົດງົດງາມ, ປະຊາຊົນລາວຈະມີຄວາມຈະເລີນຮຸ່ງເຮືອງ ແລະ ດຳລົງຊີວິດຢ່າງກົມກຽວກັບທຳມະຊາດ.

Our vision for Laos that 'the unique biodiversity, cultural diversity, and ecosystems are maintained or enhanced and contribute to the sustainable development and wellbeing of Laos, the Greater Mekong region, and the planet as a whole.' Conservation is WWF's core work, and our programme in Laos is implemented under three broads 'Practice Areas', which include Forests, Wildlife, and Freshwater. Under the five-year strategic plan (2021-2025), WWF-Laos focuses on three landscapes, four priority sites, and two groups of priority species. Find out more from www.wwf.org.la

ວິໄສທັດຂອງພວກເຮົາຕໍ່ປະເທດລາວ ໃຫ້ເຫັນວ່າ "ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ, ຄວາມຫຼາກຫຼາຍທາງດ້ານວັດທະນະທຳ, ລະບົບນິເວດແມ່ນໄດ້ຮັບການຮັກສາ ຫຼື ເສີມຂະຫຍາຍ ແລະ ປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງ ແລະ ຄວາມຜາສຸກຂອງປະເທດລາວ, ພາກພື້ນແມ່ນ້ຳຂອງ ແລະ ໂລກທັງໝົດ. ການອະນຸລັກແມ່ນວຽກງານຫຼັກຂອງ WWF, ແລະ ແຜນງານຂອງພວກເຮົາໃນລາວແມ່ນໄດ້ຖືກຈັດຕັ້ງປະຕິບັດພາຍໃຕ້ 3 ແຜນງານ ເຊິ່ງລວມມີ ປ່າໄມ້, ສັດປ່າ, ແລະ ນ້ຳຈືດ (ສັດນ້ຳ). ພາຍໃຕ້ແຜນຍຸດທະສາດ 5 ປີ (2021-2025), WWF-Laos ໄດ້ສຸມໃສ່ 3 ພື້ນທີ່ຈຸດສຸມ, 4 ເຂດບູລິມະສິດ ແລະ 2 ກຸ່ມສັດນ້ຳ-ສັດປ່າບຸລິມະສິດ. ຊອກຫາຂໍ້ມູນເພີ່ມເຕີມໄດ້ຈາກ www.wwf.org.la

WWF's interventions in the Central Annamites Landscape are mainly supported by the CARBI phase 2 project (Biodiversity Conservation in The Central Annamites through Ecosystem Protection). CARBI 2 is a transboundary project between Laos and Vietnam contributing to the protection, restoration, and sustainable use of ecosystems and the conservation of biological diversity in the Central Annamites Landscape with innovative and transformational conservation interventions that support the governments of Vietnam and Laos to meet their obligations under the Convention on Biological Diversity (CBD). Other components of the Landscape Programme include forest restoration, supporting local agencies to apply legislation on wildlife trade, community forest management planning, engagement with the private sector and transboundary cooperation with relevant agencies in Vietnam, etc. with funding support from the WWF Network.

ກິດຈະກຳຂອງອົງການ ກອງທຶນອະນຸຮັກທຳມະຊາດໂລກ ຢູ່ໃນເຂດພູມສັນຖານສາຍພູຫຼວງຕອນກາງ ຈັດຕັ້ງປະຕິບັດພາຍໃຕ້ໂຄງການ ຄາບິ 2 (ໂຄງການປົກປັກຮັກສາຊີວະນາໆພັນເຂດສາຍພູຫຼວງຕອນກາງ ຜ່ານການຄຸ້ມຄອງລະບົບນິເວດວິທະຍາ-CarBi II). ຄາບິ 2 ເປັນໂຄງການຮ່ວມຊາຍແດນລະຫວ່າງ ລາວ ແລະ ຫວຽດນາມ ປະກອບສ່ວນເຂົ້າໃນການປົກປັກຮັກສາ, ຟື້ນຟູ ແລະ ນຳໃຊ້ລະບົບນິເວດແບບຍືນຍົງ, ຄຽງຄູ່ກັບການຄຸ້ມຄອງຄວາມຫຼາກຫຼາຍຂອງຊີວະນາໆພັນໃນເຂດສາຍພູຫຼວງຕອນກາງ ໂດຍການນຳໃຊ້ນະວັດຕະກຳ ແລະ ຮູບແບບທີ່ທັນສະໄໝ ເພື່ອຊ່ວຍລັດຖະບານຂອງລາວ ແລະ ຫວຽດນາມ ບັນລຸພັນທະສະຍາຂອງຕົນຕໍ່ກັບສົນທິສັນຍາສາກົນວ່າດ້ວຍຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ (CBD). ນອກຈາກນັ້ນຍັງມີ ກິດຈະກຳການຟື້ນຟູປ່າໄມ້, ການສ້າງຄວາມເຂັ້ມແຂງໃຫ້ຄູ່ຮ່ວມງານລັດຂັ້ນທ້ອງຖິ່ນໃນການຈັດຕັ້ງປະຕິບັດກົດໝາຍກ່ຽວກັບການຄ້າ-ຂາຍສັດປ່າ, ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນໃນການວາງແຜນຄຸ້ມຄອງປ່າໄມ້, ຮ່ວມມືກັບພາກເອກະຊົນ, ໜ່ວຍງານຮ່ວມມືຊາຍແດນ ແລະ ພາກສ່ວນທີ່ກ່ຽວຂ້ອງໃນຫວຽດນາມ ດ້ວຍທຶນສະໜັບສະໜູນຈາກອົງກອນເຄືອຂ່າຍຂອງອົງການ ກອງທຶນອະນຸຮັກທຳມະຊາດ.

## II. Major Functions (ໜ້າທີ່ຫຼັກ):

CarBi II Project Driver and Logistic Assistant reports to the Project Manager, Central Annamites, He/she will be supporting Logistic and administration and vehicle management of the project. The person will take full charge of driving, operating and maintaining transportation of vehicles with a focus on safety of all passengers and the vehicles; performing daily messenger service, pre-trip and post-trip vehicle inspections; performing minor maintenance tasks on the vehicles when necessary; fuelling and cleaning the vehicles; ensuring that periodic scheduled vehicle maintenance is completed and reported; documenting staff usage. Also recording and checking vehicle log books. Under the supervision of Project Manager, Central Annamites, WWF-Laos, the Driver and Logistic Assistant will ensure timely and cost effective deliver the tasks in regard to the logistic matters including the procurement support.

ໂຊເຟີລົດ ແລະ ຊ່ວຍວຽກບໍລິຫານ ສຳລັບໂຄງການ ຄາບິ (CarBi) II ຈະຮັບຜິດຊອບດ້ານການຂັບ ແລະ ບຳລຸງຮັກສາພາຫະນະ ໂດຍເນັ້ນຄວາມປອດໄພ ແລະ ມີມາລະຍາດຕໍ່ຜູ້ໂດຍສານ; ຊ່ວຍໃນການສົ່ງຂ່າວ ຫຼື ເອກະສານກ່ຽວກັບວຽກໂຄງການປະຈຳວັນ, ການກວດກາພາຫະນະກ່ອນການເດີນທາງ ແລະ ຫລັງການເດີນທາງ; ບຳລຸງຮັກສາລົດ ແລະ ສ້ອມແປງຂະໜາດນ້ອຍໃນເວລາທີ່ຈຳເປັນ; ເຕີມນ້ຳມັນເຊື້ອໄຟ ແລະ ທຳຄວາມສະອາດພາຫະນະເປັນປົກະຕິ; ຮັບປະກັນວ່າໄດ້ມີການບັນທຶກ, ສັງລວມ ແລະ ລາຍງານການບໍລຸງຮັກສາພາຫະນະຢ່າງເປັນໄລຍະຕາມທີ່ກຳນົດໄວ້ໃນປະຕິທິນການດູແລພາຫະນະ. ບັນທຶກການນຳໃຊ້ພາຫະນະຂອງພະນັກງານ; ກະກຽມລາຍງານການເດີນທາງ; ບັນທຶກ ແລະ ລາຍງານເຫດການເກີດອຸບັດເຫດ. ພ້ອມນີ້ ຈະໄດ້ບັນທຶກແລະກວດກາປຶ້ມບັນທຶກ

ການເຄື່ອນໄຫວຂອງພາຫະນະ (Logbook). ພາຍໃຕ້ການຊີ້ນໍາທົ່ວໄປ ຂອງຜູ້ຈັດການໂຄງການ WWF-Laos, ໄຊເຟີລິດ ແລະ ຜູ້ຊ່ວຍວຽກບໍລິຫານ ສໍາລັບໂຄງການ ຄາບີ (CarBi) II, ຮັບປະກັນວ່າ ໄດ້ໃຫ້ບໍລິການຕົງເວລາ ແລະ ນໍາໃຊ້ງົບປະມານຢ່າງຄຸ້ມຄ່າໃນການຈັດຕັ້ງປະຕິບັດໜ້າວຽກຕ່າງໆກ່ຽວກັບສິ່ງອໍານວຍຄວາມສະດວກ ແລະ ການຈັດຊື້ຈັດຈ້າງທີ່ຈໍາເປັນສໍາລັບໂຄງການ.

**III. Major Duties and Responsibilities** (ໜ້າວຽກຫລັກ ແລະຄວາມຮັບຜິດຊອບ)**:**

- Drive vehicle for project staff and staff in other offices during their working in provinces, target districts, target villages and throughout the country when required;
- Presents safety briefing to passengers prior to each trip departure;
- Responds immediately to accident or medical emergencies by notifying management and medical services providers, and rendering First Aid until emergency personnel arrive; Keeps the assigned vehicle(s) clean inside and outside;
- Operates assigned vehicle in a safe and courteous manner;
- Always keep project vehicle(s) clean inside and outside, and maintains defensive driving and parking cars in proper area before home;
- Ensure the vehicle logbook is properly maintained and submit to Project Support Officer by the end of each month. All journeys must be logged in vehicle logbook on regular basis;
- Small office maintenance such as: fixing water pipe when is leaking or water taps is broken; fixing/changing door lock, changing the light tube and fixing the photo flame to the walls when require; and provide additional services in the project as needed when not driving.
- Provides staff and guests with prompt service;
- Coordinate and ensure the logistic support provided in timely and in according to WWF-Laos policy and procedures.
- Daily messenger service to the Provincial government partner agencies, organizations, companies, bus station and others places within the project area.

**ໜ້າວຽກຫລັກ ແລະ ຄວາມຮັບຜິດຊອບ:**

- ຂັບລົດໃຫ້ພະນັກງານໂຄງການ ແລະ ພະນັກງານຫ້ອງການອື່ນ ໃນລະຫວ່າງເຮັດວຽກຢູ່ບັນດາແຂວງ, ເມືອງ, ບ້ານເປົ້າໝາຍ ແລະ ສະຖານທີ່ອື່ນໃນປະເທດລາວຕາມຕ້ອງການຂອງໜ້າວຽກຕົວຈິງ.
- ແນະນຳການນັ່ງ ແລະ ປະຕິບັດຕົວທີ່ຖືກຕ້ອງໃຫ້ກັບຜູ້ຮ່ວມເດີນທາງເຊັ່ນ: ໃຫ້ໃສ່ເຂັມຂັດນິລະໄພ ບໍ່ໃຫ້ສູບຢາໃນລົດ ບໍ່ດື່ມຂອງມຶນເມົາກ່ອນ ແລະຂະນະຂັບ-ຂີ່ລົດ ເປັນຕົ້ນ.
- ເມື່ອເກີດອຸປະຕິເຫດໃຫ້ພົບແພດດ່ວນ ແລ້ວລາຍງານທັນທີຕໍ່ໜ່ວຍງານທີ່ກ່ຽວຂ້ອງເຊັ່ນປະກັນໄພ, ຊ່ວຍເຫລືອຄົນເຈັບໂດຍການປະຖົມພະຍາບານເບື້ອງຕົ້ນ ຈົນກວ່າລົດພະຍາບານຈະມາເຖິງ;
- ຂັບ-ຂີ່ລົດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນດ້ວຍຄວາມສຸພາບ ແລະ ໃນລະດັບມີຄວາມປອດໄພ;
- ບໍລຸງຮັກສາພາຫະນະໃຫ້ຢູ່ໃນຄວາມສະອາດ, ສະພາບພ້ອມໃຊ້ງານ ຢູ່ສະເໝີ ແລະ ຫຼັງຈາກແລ້ວວຽກໃຫ້ຈອດມ້ຽນລົດເປັນລະບຽບກ່ອນກັບບ້ານ;
- ຮັບປະກັນວ່າ ມີການບັນທຶກການໃນນຳໃຊ້ລົດໃສ່ຟອມຕິດຕາມການນຳໃຊ້ລົດ (ລັອກບຸກ-*logbook)* ເປັນປົກກະຕິ ແລະ ສັງລວມລັອກບຸກ-*logbook* ຂອງລົດໂຄງການທຸກຄັນ ລາຍງານໃຫ້ແກ່ຜູ້ຊ່ວຍໂຄງການຝ່າຍບໍລິຫານ ໃນທຸກໆທ້າຍເດືອນ;
- ສ້ອມແປງເລັກນ້ອຍພາຍໃນຫ້ອງການຕາມຄວາມສາມາດເຊັ່ນ: ທໍ່ນ້ຳ, ກ໊ອກນ້ຳ ແຕກ,ຮົ່ວ; ແປງ ຫລື ປ່ຽນໄລລ໊ອກປະຕູເມື່ອເຫັນວ່າມັນເປ່ເພ, ປ່ຽນຫລອດໄຟ; ຍ້າຍ ຫລື ຕິດຕັ້ງຮູບພາບຕ່າງໆ ເວລາທີ່ມີຄວາມຕ້ອງການ; ແລະ ໃຫ້ຄວາມຊ່ວຍເຫລືອດ້ານອື່ນໆ ແກ່ພະນັກງານ ແລະ ແຂກ ໃນເວລາທີ່ບໍ່ໄດ້ຂັບລົດອອກວຽກນອກ.
- ໃຫ້ການຊ່ວຍເຫລືອ ຫຼື ບໍລິການ ແກ່ພະນັກງານ ແລະ ແຂກ ດ້ວຍຄວາມວ່ອງໄວ;
- ເຮັດວຽກຮ່ວມຫົວໜ້າສາຍງານ ແລະ ຊ່ວຍປະສານງານ ເພື່ອຮັບປະກັນວ່າ ການກະກຽມດ້ານການເດີນທາງ, ຮ້ານອາຫານ ແລະ ທີ່ພັກໃຫ້ແກ່ທີມງານໂຄງການທີ່ລົງຈັດຕັ້ງປະຕິດວຽກຢູ່ຕ່າງແຂວງ ມີຄວາມພ້ອມ, ກົງເວລາ ແລະ ໄປຕາມລະບຽບຂອງອົງການທີ່ວາງໄວ້.
- ຈັດສົ່ງເອກະສານໄປບັນດາພະແນກການທີ່ເປັນຄູ່ຮ່ວມງານພາຍໃນແຂວງ ແລະ ເມືອງເປົ້າໝາຍ, ອົງການ, ບໍລິສັດ, ສະຖານີລົດເມ ແລະບ່ອນອື່ນໆ ພາຍໃນແຂວງສາລະວັນ ແລະ ເຊກອງ ລວມທັງເມືອງເປົ້າໝາຍຂອງແຂວງດັ່ງກ່າວ ເມື່ອມີຄວາມຕ້ອງການ.

**IV. Profile** (ຂໍ້ມູນກ່ຽວກັບຜູ້ສະໝັກ):

**Required Qualifications**

- Graduated High School minimum.
- Must have driving license with AB level at least.
- Experiences in driving at least 3 years
- Experiences driving in mountainous areas and speak basis English will be highly considered

**ວຸດທິການສຶກສາ**

- ຢ່າງໜ້ອຍຈົບມໍປາຍ

- ມີໃບຂັບຂີ່ປະເພດ **AB** ເປັນຢ່າງໜ້ອຍ
- ມີປະສົບການ ໃນການຂັບຂີ່ ຢ່າງໜ້ອຍ 3 ປີ
- ຖ້າມີປະສົບການ ຂັບຂີ່ລົດໃນເຂດພູດອຍ ແລະ ສາມາດສື່ສານພາອັງກິດຂັ້ນພື້ນຖານ ຈະຖືກພິຈາລະນາ ເປັນພິເສດ

**Required Skills and Competencies**

- Teamwork and virtual support
- Able to communicate in English and influence in Laos language
- Working under pressure, hard worker and with minimum supervision

**ທັກສະ ແລະ ຄວາມສາມາດ**

- ສາມາດເຮັດວຽກເປັນທີມ,
- ສາມາດສື່ສານພາສາອັງກິດຂັ້ນພື້ນຖານ ແລະ ພາສາລາວ,
- ສາມາດເຮັດວຽກພາຍໃຕ້ສະຖານະການກົດດັນ, ວຽກໜັກ ແລະ ການຊີ້ນໍາຂັ້ນຕໍ່າ.

V. **Working Relationships** (ຄວາມສໍາພັນໃນການເຮັດວຽກ)**:**

- **Internal** – WWF-Laos, Project staff in the Landscape: report directly to the Project Manager, Central Annamites, coordinate on a regular basis with the Project Support Officer and Logistic Assistant and Drive in VTE office and engage with all WWF-Laos staff.
- **External** – Interact with all relevant stakeholders at the community, district, and provincial level and suppliers/services where relevance
- **ພາຍໃນ** – ອົງການກອງທຶນອະນຸຮັກທໍາມະຊາດໂລກ ປະຈໍາ ສປປລາວ, ພະນັກງານໂຄງການ ຄາບີ 2: ລາຍງານໂດຍຕົງຫາ ຮອງຫົວໜ້າໂຄງການ ຄາບີ 2, ປະສານວຽກປະຈໍາ ກັບຜູ້ຊ່ວຍໂຄງການຝ່າຍບໍລິຫານ ແລະ ຜູ້ຊ່ວຍວຽກບໍຫານ-ຂັບລົດຂອງອົງການປະຈໍາທີ່ວຽງຈັນ ແລະ ຮ່ວມມືກັບພະນັກງານອົງການ WWF-Laos ທຸກຄົນ.
- **ພາຍນອກ** – ພົວພັນກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນຂັ້ນຊຸມຊົນ, ຂັ້ນເມືອງ ແລະ ແຂວງ ຕະຫຼອດຮອດຜູ້ໃຫ້ການບໍລິການກ່ຽວກັບການຈັດຊື້ຕ່າງໆທີ່ກ່ຽວຂ້ອງ.

## VI. WWF's Values & Behaviours (ຄຸນຄ່າຂອງອົງການອະນຸຮັກທຳມະຊາດໂລກ ແລະຄຸນສົມບັດ):

- Adhere to WWF's values: Courage, Respect, Collaboration and Integrity.
- Demonstrates WWF core value in action of working: Strive for Impact, Listen Deeply, Collaborate Openly, and Innovate Fearlessly.
- ສາມາດປະຕິບັດຕາມຄຸນຄ່າຂອງ WWF: ຄວາມກ້າຫານ, ຄວາມຮ່ວມມື, ຄວາມເຄົາລົບ ແລະ ຄວາມຊື່ສັດ.
- ສະແດງໃຫ້ເຫັນຄຸນຄ່າຫລັກຂອງ WWF ໃນການປະຕິບັດການເຮັດວຽກ: ມຸ່ງໝັ້ນຕໍ່ຜົນໄດ້ຮັບສູງສຸດ, ຮັບຟັງຢ່າງເລິກເຊິ່ງເຖິງຖອງແທດ ແລະ ຜົນ, ຮ່ວມມືຢ່າງເປີດເປີດກວ້າງ ແລະ ໂປ່ງໃສ, ກ້າທີ່ຈະປະດິດຄິດສ້າງສິ່ງໃໝ່ຂຶ້ນມາ.

This job description covers the main tasks and conveys the spirit of the sort of tasks that are anticipated proactively from staff. Other tasks may be assigned as necessary according to organizational needs.

ລາຍລະອຽດກ່ຽວກັບຕຳແໜ່ງວຽກນີ້ ກວມເອົາວຽກງານຕົ້ນຕໍ ແລະ ອັນທີ່ສະແດງເຖິງຈິດວິນຍານຂອງວຽກທີ່ຄາດວ່າຈະໄດ້ຮັບການຈັດຕັ້ງປະຕິບັດຢ່າງຈິງຈັງຈາກພະນັກງານ. ວຽກອື່ນໆອາດຖືກມອບໝາຍ ຕາມຄວາມຕ້ອງ ການຕົວຈິງຂອງອົງກອນ.

Prepared by Supervisor/ກະກຽມໂດຍຫົວໜ້າສາຍງານ: [signature] Date: 18 May 2022

Verify by P&CM/ຜູ້ຈັດການຝ່າຍມອບຊັບ ແລະ ວັດທະນະທຳ: ____________ Date: __________

Accepted by Staff member/ພະນັກງານ: __________________ Date: ______________